**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 59 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08 / 07 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບ ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2020;
- ອີງຕາມ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງປີ 2020;
- ອີງຕາມ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 217/ຖວທ, ລົງວັນທີ 15 ມິຖຸນາ 2022 ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX.

ຜ່ານການຮັບຟັງການລາຍງານ, ການຕິດຕາມກວດກາ ແລະ ການຄົ້ນຄວ້າປະກອບຄຳເຫັນ ຂອງກອງປະຊຸມສະພາແຫ່ງຊາດຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງລັດຖະບານ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19**

ກອງປະຊຸມຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດ ຂອງພະຍາດໂຄວິດ-19 ແລະ ຊົມເຊີຍລັດຖະບານໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວ 5 ປີ (2021-2025), ໂດຍສະເພາະ ການຈັດຕັ້ງປະຕິບັດແຜນຟື້ນຟູການທ່ອງທ່ຽວທີ່ປອດໄພຈາກພະຍາດໂຄວິດ-19 ໄດ້ມີຜົນສຳເລັດຫຼາຍ

ດ້ານ ເປັນຕົ້ນ ໂຄງການລາວທ່ຽວລາວ, ການເປີດປະເທດຕ້ອນຮັບນັກທ່ອງທ່ຽວແບບເຕັມຮູບແບບ ສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວລາວໄດ້ຫຼາຍຂຶ້ນ ສ້າງລາຍຮັບໃຫ້ແກ່ປະເທດ ແລະ ປະຊາຊົນບັນດາເຜົ່າ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ.

ໄປຄຽງຄູ່ກັນນັ້ນ, ກອງປະຊຸມຍັງເຫັນວ່າການໂຄສະນາເຜີຍແຜ່ບັນດານິຕິກຳ ທີ່ຕິດພັນກັບການເປີດເຂດທ່ອງທ່ຽວສີຂຽວບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງບັນດາກຸ່ມເປົ້າໝາຍ ເຮັດໃຫ້ ການຈັດຕັ້ງປະຕິບັດບໍ່ເຂັ້ມງວດ, ກົນໄກ ແລະ ວິທີການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ບໍ່ທັນລະອຽດ, ຈະແຈ້ງ ແລະ ຄ່ອງໂຕເທົ່າທີ່ຄວນ, ການຝຶກອົບຮົມຫົວໜ່ວຍທຸລະກິດທ່ອງທ່ຽວ ພາຍໃຕ້ໂຄງການມາດຕະຖານສຸຂະອານາໄມໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ (Lao Safe) ບໍ່ທັນທົ່ວເຖິງ ແລະ ຊັກຊ້າ, ບຸກຄະລາກອນທີ່ເຮັດໜ້າທີ່ບໍລິການຕິດພັນກັບການທ່ອງທ່ຽວບໍ່ພຽງພໍຍ້ອນຖືກເລີກຈ້າງງານຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19 ແກ່ຍາວ, ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ ໂດຍສະເພາະກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ຂອງຜູ້ປະກອບການທີ່ຕິດພັນກັບການທ່ອງທ່ຽວ ຍັງພົບຄວາມຫຍຸ້ງຍາກ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການໃນຕໍ່ໜ້າ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ບັນດາເນື້ອໃນທີ່ກຳນົດໄວ້ໃນທິດທາງແຜນການໃນຕໍ່ໜ້າ ຊຶ່ງປະກອບມີ 3 ວຽກໃຫຍ່ ຄື: ການພັດທະນາພື້ນຖານໂຄງລ່າງການທ່ອງທ່ຽວ ລວມມີ 3 ວຽກຈຸດສຸມ, ການໂຄສະນາການທ່ອງທ່ຽວ ລວມມີ 5 ວຽກຈຸດສຸມ, ການຄຸ້ມຄອງ ແລະ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນໃນຂະແໜງການທ່ອງທ່ຽວ ລວມມີ 4 ວຽກຈຸດສຸມ. ເພື່ອຮັບປະກັນການຈັດຕັ້ງປະຕິບັດທິດທາງ, ແຜນການ ແລະ ວຽກຈຸດສຸມ ໃຫ້ບັນລຸຄາດໝາຍທີ່ວາງໄວ້ ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຈັດຕັ້ງປະຕິບັດບາງດ້ານເພີ່ມເຕີມ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ໃຫ້ບຸລິມະສິດແກ່ການພັດທະນາວຽກງານທ່ອງທ່ຽວ ເພື່ອຫັນໄປສູ່ການເປັນອຸດສາຫະກຳເທື່ອລະກ້າວ, ໃນການອະນຸມັດບັນດາໂຄງການລົງທຶນຕ່າງໆ ບໍ່ໃຫ້ທັບຊ້ອນ ແລະ ສົ່ງຜົນກະທົບທາງລົບຕໍ່ແຫຼ່ງທ່ອງທ່ຽວ ທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ; ພັດທະນາພື້ນຖານໂຄງລ່າງ ເປັນຕົ້ນ ເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວບຸລິມະສິດ, ປັບປຸງສະຖານທີ່ທ່ອງທ່ຽວ ແລະ ການບໍລິການ ໃຫ້ໄດ້ມາດຕະຖານ, ການແບ່ງຂັ້ນຄຸ້ມຄອງໃຫ້ຊັດເຈນ, ຟື້ນຟູແຫຼ່ງທ່ອງທ່ຽວທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຕາມແຜນວຽກຈຸດສຸມໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

2. ເພີ່ມທະວີການຮ່ວມມືລະຫວ່າງພາກລັດ, ຜູ້ປະກອບການ, ເອກະຊົນພາຍໃນ ແລະ ຕ່າງປະເທດ ເພື່ອປັບປຸງຖານຂໍ້ມູນການບໍລິການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ, ເປັນລະບົບຄົບຊຸດ ແລະ ທັນກັບສະພາບການ, ມີຖານຂໍ້ມູນເຊື່ອມຈອດກັບທຸກແຂວງໃນທົ່ວປະເທດ ແລະ ເຊື່ອມໂຍງກັບລະບົບສາກົນ ພ້ອມທັງມີການໂຄສະນາຜ່ານສື່ ແລະ ຮູບການອື່ນ ລວມທັງຜ່ານສະຖານທູດ, ສະຖານກົງສູນລາວປະຈຳຢູ່ຕ່າງປະເທດ ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດມາທ່ອງທ່ຽວລາວໃຫ້ຫຼາຍຂຶ້ນ;

3. ສຳຫຼວດຄວາມຄິດເຫັນຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ຢ່າງເປັນປະຈຳ (ຕໍ່ການທ່ອງທ່ຽວໃນລາວ) ເພື່ອນຳຂໍ້ມູນດັ່ງກ່າວໄປປັບປຸງການບໍລິການທ່ອງທ່ຽວໃຫ້ດີຂຶ້ນ;

4. ເພີ່ມທະວີການໂຄສະນາສຸຂະສຶກສາ, ສຸຂະອານາໄມ, ປະຕິບັດວິຖີການດຳລົງຊີວິດແບບໃໝ່ປົກກະຕິ, ສືບຕໍ່ສັກວັກຊີນເຂັມ 2, ເຂັມກະຕຸ້ນປ້ອງກັນພະຍາດໂຄວິດ-19 ໃຫ້ໄດ້ຫຼາຍກວ່າ 80%, ກຳນົດມາດຕະການປ້ອງກັນພະຍາດໂຄວິດ-19 ໃຫ້ນັກທ່ອງທ່ຽວມີຄວາມສະດວກ, ປອດໄພ ແລະ ຈູງໃຈ, ໄປຄວບຄູ່ກັບການເຝົ້າລະວັງການແຜ່ລະບາດຂອງພະຍາດອື່ນທີ່ອາດຈະເກີດຂຶ້ນ;

5. ຊີ້ນຳຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄວາມປອດໄພ, ການອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ເປັນຕົ້ນ: ການເຂົ້າ-ອອກຂອງນັກທ່ອງທ່ຽວ, ການສະໜອງຂໍ້ມູນໃຫ້ນັກທ່ອງທ່ຽວຢູ່ກັບດ່ານ, ການເພີ່ມອາຍຸວິຊາໃຫ້ແກ່ນັກທ່ອງທ່ຽວ, ການຄວບຄຸມລາຄາສິນຄ້າ, ຄວາມປອດໄພດ້ານອາຫານ, ເຄື່ອງດື່ມ, ຄ່າພັກເຊົາ,

ຄ່າຂົນສົ່ງ, ຄ່າໂດຍສານ, ຄ່າປີ້ເຂົ້າຊົມແຫຼ່ງທ່ອງທ່ຽວ, ປີ້ລົດໄຟ ລວມທັງປ້າຍຊີ້ບອກສະຖານທີ່ທ່ອງທ່ຽວ ເພື່ອສ້າງຄວາມປະທັບໃຈ ແລະ ດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວລາວຫຼາຍຂຶ້ນ;

6. ສືບຕໍ່ກໍ່ສ້າງ, ຝຶກອົບຮົມບຸກຄະລາກອນ ແລະ ຂຶ້ນທະບຽນເປັນທາງການ ເພື່ອຕອບສະໜອງບຸກຄະລາກອນໃຫ້ແກ່ການບໍລິການນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ໃຫ້ຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;

7. ຊຸກຍູ້ສົ່ງເສີມພູມປັນຍາທ້ອງຖິ່ນ ເພື່ອສ້າງຜະລິດຕະພັນການທ່ອງທ່ຽວທີ່ຫຼາກຫຼາຍ, ລວມທັງເຄື່ອງທີ່ລະນຶກທີ່ເປັນເອກະລັກຂອງແຕ່ລະເຜົ່າ, ແຕ່ລະທ້ອງຖິ່ນ ແລະ ຂອງຊາດ;

8. ສະເໜີລັດຖະບານພິຈາລະນາ ແລະ ກໍານົດອັດຕາສ່ວນກ່ຽວກັບການສະໜອງແຫຼ່ງທຶນເງິນກູ້ດອກເບ້ຍຕໍ່າໃຫ້ແກ່ການຟື້ນຟູກິດຈະການການທ່ອງທ່ຽວ ຈາກກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກອງທຶນຟື້ນຟູເສດຖະກິດ ຫຼື ແຫຼ່ງທຶນດອກເບ້ຍຕໍ່າອື່ນໆ ເພື່ອອໍານວຍຄວາມສະດວກໃຫ້ຜູ້ປະກອບການໄດ້ເຂົ້າເຖິງແຫຼ່ງທຶນດັ່ງກ່າວ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານ ຊີ້ນໍາກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການວັດທະນະທໍາ-ສັງຄົມ, ບັນດາກໍາມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດໍາເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ